ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສຶກສາທິການ

ກົມສ້າງຄູ

ວິທະຍາໄລຄູສະຫວັນນະເຂດ

797

ເລກທີ......................./ວຄສ/2016

ວັນທີ.......17 NOV 2016.............

# ຂໍ້ຕົກລົງຂອງຜູ້ອຳນວຍການ

## ວ່າດ້ວຍການອະນຸມັດນຳໃຊ້ວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016-2020) ຂອງວິທະຍາໄລຄູສະຫວັນນະເຂດ

ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 2870/ສສກ.ຈຕ ລົງວັນທີ 22 ກໍລະກົດ 2015 ວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງບໍລິຫານວິທະຍາໄລຄູສະຫວັນນະເຂດ

ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1195/ສສກ.ສຄ ລົງວັນທີ 9 ມີນາ 2016 ວ່າດ້ວຍການອະນຸມັດທົດລອງນຳໃຊ້ຄູ່ມືການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ ສຳລັບສາຍສ້າງຄູ

ອີງຕາມ: ແຈ້ງການຂອງທ່ານຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 699/ສຄ ລົງວັນທີ 29 ກັນຍາ 2016 ເລື່ອງການສ້າງສູນແຫ່ງການພັດທະນາຢູ່ໃນວິທະຍາໄລຄູ

ອີງຕາມ: ການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບຂອງຄະນະກຳມະການດຳເນີນງານສ້າງແຜນຍຸດທະສາດຂອງວິທະຍາໄລຄູສະຫວັນນະເຂດຄັ້ງວັນທີ 2 ພະຈິກ 2016

**ຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ ຈຶ່ງຕົກລົງ:**

ມາດຕາ 1: ອະນຸມັດນຳໃຊ້ ວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016-2020) ຂອງວິທະຍາໄລຄູສະຫວັນນະເຂດ

ມາດຕາ 2: ມອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມວິໄສທັດ ແລະ ແຜນຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຜູ້ອຳນວຍການ

ກະຊວງສຶກສາທິການ ແລະ ກິລາ ວິທະຍາໄລຄູ ສະຫວັນນະເຂດ ກົມສ້າງຄູ

ລັດສະໝີ ພະໄຊສີ

ບ່ອນສົ່ງ:

- ຄະນະອຳນວຍການ 4 ສະບັບ
- ຫ້ອງການ 10 ສະບັບ
- ເກັບມ້ຽນ 1 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------ooo---------------

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສະຫວັນນະເຂດ

ເລກທີ 696/ວຄສ/2016

ວັນທີ 04 NOV 2016

# ວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016-2020) ເພື່ອສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ

- ອີງຕາມ : ວິໄສທັດຮອງປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016 - 2020)
- ອີງຕາມ : ມະຕິກອງປະຊຸມສຳມະນາເພື່ອການສ້າງຂີດຄວາມສາມາດໃນການພັດທະນາສູນກາງແຫ່ງ ຄວາມເປັນເລີດ ຄັ້ງວັນທີ ……………………
- ອີງຕາມ: ຜົນການຄົ້ນຄວ້າຂອງຄະນະກຳມະການດຳເນີນງານສ້າງແຜນຍຸດທະສາດຂອງວິທະຍາໄລຄູ ສະຫວັນນະເຂດ

**ຈຸດປະສົງ**

- ເພື່ອເປັນແນວທາງໃນການປະຕິບັດໃຫ້ ວິທະຍາໄລຄູສະຫວັນນະເຂດ ເປັນສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ.

## I. ການວິເຄາະສະພາບລວມຂອງວິທະຍາໄລຄູ ສະຫວັນນະເຂດ ຕາມຮູບແບບຂອງ (SWOT analysis)

### 1. ຈຸດແຂງ (S):

❖ **ການບໍລິຫານ**

- ມີຜູ້ບໍລິຫານທີ່ຮຽນຈົບການບໍລິຫານ
- ການປະຕິບັດນະໂຍບາຍມີການລວມສູນ
- ມີສັກກາຍະພາບໃນການວາງແຜນ, ຄຸ້ມຄອງ ແລະ ພັດທະນາ

❖ **ບຸກຄະລາກອນ**

- ຄູປະຈຳການສຳລັບດຳເນີນການສອນສາຂາວິຊາ ພຽງພໍ (205 ຄົນ, ຍິງ 108 ຄົນ, ປະລິນຍາເອກ 1 ຄົນ, ປະລິນຍາໂທ 43 ຄົນ, ຍິງ 18 ຄົນ, ມີອາຈານຈາກຕ່າງປະເທດມາປະຈຳຢູ່ໄລຍະຍາວ 5 ຄົນ, ຍິງ 5 ຄົນ).
- ມີຄູຈົບວຸດທິປະລິນຍາເອກໃນສາຂາວິຊາຄະນິດສາດ 1 ຄົນ.

- ມີຄູຈົບວຸດທິປະລິນຍາໂທໃນສາຂາວິຊາ ຄະນິດສາດ 5 ຄົນ, ສາຂາຟີຊິກສາດ 5 ຄົນ, ຍິງ 1 ຄົນ (ກຳລັງຄົ້ນຄວ້າປະລິນຍາເອກ 1 ຄົນ). ເຄມີສາດ 3 ຄົນ, ຍິງ 2 ຄົນ, ຊີວະສາດ 3 ຄົນ, ຍິງ 1 ຄົນ (ກຳລັງຄົ້ນຄວ້າປະລິນຍາເອກ 1 ຄົນ).

❖ **ພື້ນຖານໂຄງລ່າງ**

- ອາຄານສະຖານທີ່ ປະກອບມີ: ອາຄານບໍລິຫານ 1 ຫຼັງ ມີ 9 ຫ້ອງ, ອາຄານອະເນກປະສົງ ມີ 2 ຫຼັງ, ອາຄານຮຽນ 9 ຫຼັງ ມີ 67 ຫ້ອງ, ອາຄານທີ່ພັກພະນັກງານຄູ-ອາຈານ 5 ຫຼັງ ມີ 32 ຫ້ອງ, ຫໍພັກນັກສຶກສາ 6 ຫຼັງ ມີ 78 ຫ້ອງ ແລະ ອາຄານຮັບແຂກ 1 ຫຼັງ ມີ 3 ຫ້ອງນອນ.
- ເດີ່ນກິລາ ປະກອບມີດັ່ງນີ້: ເດີ່ນບານເຕະ 1 ເດີ່ນ, ເດີ່ນກະຕໍ້ 2 ເດີ່ນ, ເດີ່ນກິລາຮົ່ມ 1 ເດີ່ນ, ເດີ່ນກິລາດອກປີກໄກ່ 1 ເດີ່ນ ແລະ ເດີ່ນກິລາເປຕັງ 3 ເດີ່ນ.
- ສູນເຝິກວິຊາຊີບ ປະກອບມີ: ສູນເຝິກການລ້ຽງສັດ, ສູນເຝິກການເສີມສວຍ, ສູນເຝິກຊ່າງໄມ້, ສູນເຝິກການຕັດຫຍິບ, ສູນເຝິກການປຸງແຕ່ງ, ສູນເຝິກການປູກຝັງ ແລະ ຫ້ອງວາງສະແດງມູນເຊື້ອ.
- ສູນອຳນວຍຄວາມສະດວກພາຍໃນ ປະກອບມີ: ສູນອຸປະກອນການສຶກສາ 1 ຫຼັງ, ສູນອາຫານ 2 ຫຼັງ ແລະ ສະຖານທີ່ຈອດລົດນັກສຶກສາ ແລະ ຄູ-ອາຈານ 1 ແຫ່ງ.

❖ **ສິ່ງອຳນວຍຄວາມສະດວກ**

- ຫ້ອງທົດລອງ ແລະ ຫ້ອງເຝິກສອນ ປະກອບມີ: ຫ້ອງທົດລອງຟີຊິກ 1 ຫ້ອງ, ຫ້ອງທົດລອງເຄມີ 1 ຫ້ອງ, ຫ້ອງທົດລອງຊີວະສາດ 1 ຫ້ອງ, ຫ້ອງເຝິກສອນສາຍວິທະຍາສາດທຳມະຊາດ 1 ຫ້ອງ, ຫ້ອງເຝິກສອນສາຍມັດທະຍົມ 1 ຫ້ອງ, ຫ້ອງເຝິກສອນສາຍປະຖົມ 1 ຫ້ອງ, ຫ້ອງຟັງສຽງພາສາອັງກິດ 2 ຫ້ອງ, ຫ້ອງພູມສາດ 1 ຫ້ອງ, ຫ້ອງຮຽນຄອມພິວເຕີ 3 ຫ້ອງ, ຫ້ອງປະຊຸມ 1 ຫ້ອງ ແລະ ຫ້ອງສະໝຸດ 1 ຫ້ອງ.
- ມີອາຄານຮຽນພຽງພໍ.
- ອຸປະກອນຮັບໃຊ້ໃນສາຂາວິຊາ ຄະນິດສາດ, ເຄມີສາດ, ຟີຊິກສາດ, ຊີວະສາດ ພຽງພໍ.
- ມີໂຮງຮຽນສາທິດ ແລະ ໂຮງຮຽນເຄືອຂ່າຍສຳລັບເຝິກປະສົບການວິຊາຊີບຄູ.
- ມີລະບົບອິນເຕີເນັດທີ່ສາມາດສະໜອງຂໍ້ມູນໃນລະດັບດີ.

❖ **ດ້ານຫຼັກສູດ**

- ມີຫຼັກສູດການສ້າງຄູໃນສາຂາວິຊາທີ່ເປັນເປົ້າໝາຍພັດທະນາ.
- ມີປຶ້ມຄູ່ມື ແລະ ເອກະສານຮັບໃຊ້ຫຼັກສູດທີ່ເປີດສອນ.
- ມີໜ່ວຍງານຄຸ້ມຄອງ ແລະ ທົບທວນຫຼັກສູດ.

❖ **ດ້ານການວິໄຈ ແລະ ຜົນງານວິຊາການ**

- ວິທະຍາໄລຄູສະຫວັນນະເຂດ ໄດ້ພັດທະນາການວິໄຈຕາມຂະບວນການແຕ່ລະດັບພື້ນຖານຄື ການວິໄຈພາກປະຕິບັດໃນຊັ້ນຮຽນຂອງບັນດາຄູອາຈານທຸກສາຍຮຽນພາຍໃນວິທະຍາໄລຄູສະຫວັນນະເຂດ ແລະ ການວິໄຈເພື່ອການພັດທະນາການຮຽນ-ການສອນ ແລະ ພັດທະນາວຽກງານບໍລິຫານຂອງບັນດາຄູອາຈານ ແລະ ພະນັກງານ ຈົນເຖິງລະດັບການຮ່ວມມືກັບສາກົນ ເຊັ່ນ :ໃນສົກຮຽນ 2013 ເປັນຕົ້ນມາ ໄດ້ຮ່ວມມືເຮັດການວິໄຈກັບມະຫາວິທະຍາໄລຊິນຊູ, ປະເທດຍີ່ປຸ່ນ, ປີ 2014 ເປັນຕົ້ນມາ ໄດ້

ຮ່ວມເຮັດການວິໄຈກັບມະຫາວິທະຍາໄລການສຶກສານາລຸໂຕະ, ປະເທດຍີ່ປຸ່ນ, ປີ 2016 ໄດ້ຮ່ວມເຮັດການວິໄຈກັບມະຫາວິທະຍາໄລບູລະພາ ແລະ ມະຫາວິທະຍາໄລທຳມະສາດ, ປະເທດໄທ.

2. **ຈຸດອ່ອນ (W):**

❖ **ການບໍລິຫານ**

- ຜູ້ບໍລິຫານລະດັບໜ່ວຍງານຈຳນວນໜຶ່ງປະສົບປະການດ້ານການບໍລິຫານບໍ່ຫຼາຍ
- ຜູ້ບໍລິຫານຈຳນວນໜຶ່ງ ຍັງຮັບຜິດຊອບຫຼາຍວຽກພ້ອມກັນ ເຊັ່ນ:ທັງເຮັດວຽກບໍລິຫານ ແລະ ວິຊາການ

❖ **ບຸກຄະລາກອນ**

- ວຸດທິຂອງນັກວິຊາການທີ່ໄດ້ຕາມມາດຖານຂອງການສ້າງເປັນ COD ແລະ COE ຍັງບໍ່ພຽງພໍ.
- ຄວາມສາມາດທາງດ້ານການເງິນຂອງຄູ ແລະ ສະຖາບັນຕໍ່ກັບການໄປຍົກລະດັບປະລິນຍາໂທ ແລະ ປະລິນຍາເອກ ຍັງຈຳກັດ.
- ຄວາມຮູ້ພາສາຕ່າງປະເທດຂອງຄູສອນຈຳນວນໜຶ່ງຍັງຈຳກັດ.

❖ **ດ້ານພື້ນຖານໂຄງລ່າງ**

- ອາຄານຮຽນຈຳນວນໜຶ່ງເກົ່າແກ່

❖ **ສິ່ງອຳນວຍຄວາມສະດວກ**

- ແຫຼ່ງການຄົ້ນຄວ້າທາງອິນເຕີເນັດຍັງຢູ່ເຂດຈຳກັດ
- ຈຳນວນປຶ້ມຄູ່ມືສຳລັບການຄົ້ນຄວ້າໃນຫ້ອງສະໝຸດຍັງບໍ່ທັນຫຼາກຫຼາຍ

❖ **ດ້ານການວິໄຈ ແລະ ການເຜີຍແຜ່ຜົນງານວິຊາການ**

- ຄູທີ່ມີຜົນງານການວິໄຈຈຳນວນໜຶ່ງບໍ່ສາມາດສະເໜີຜົນງານໃນລະດັບສາກົນໄດ້ຍ້ອນຂາດຄວາມຮູ້ພາສາອັງກິດ.
- ຍັງບໍ່ທັນມີສະພາວິຊາການພາຍໃນສະຖາບັນເພື່ອຮັບຮອງຜົນງານການວິໄຈຂອງຄູ.

3. **ໂອກາດ (O):**

❖ **ດ້ານການບໍລິຫານ**

- ມີນິຕິກຳດ້ານນະໂຍບາຍການພົວພັນຕ່າງປະເທດທີ່ເອື້ອອຳນວຍ
- ຫຼາຍສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດມີຄວາມສົນໃຈຮ່ວມມືດ້ານວິຊາການ

❖ **ດ້ານບຸກຄະລາກອນ**

- ໄດ້ຮັບການຊ່ວຍເຫຼືອຈາກສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດທີ່ມີ MOU ໃນການໃຫ້ທຶນການສຶກສາໃນລະດັບປະລິນຍາໂທ ແລະ ປະລິນຍາເອກ.
- ພະນັກງານຈຳນວນໜຶ່ງມີຄວາມສາມາດໃນການຊອກຫາແຫຼ່ງທຶນໃນການເຝິກອົບຮົມ ແລະ ສຶກສາຕໍ່ໂດຍຜ່ານສື່ຂອງສະຖາບັນການສຶກສາ ແລະ ອົງການຈັດຕັ້ງສາກົນ.
- ພະນັກງານຄູ-ອາຈານມີຄວາມສາມາດເຂົ້າຮ່ວມສະເໜີຜົນງານທາງດ້ານການວິໄຈທັງພາຍໃນ ແລະ ລະດັບສາກົນ.

❖ **ດ້ານພື້ນຖານໂຄງລ່າງ**

- ມີທີ່ຕັ້ງເໝາະສົມສຳລັບຜູ້ຮຽນ (ຢູ່ອ້ອມຂ້າງມີສູນບໍລິການດ້ານແຫຼ່ງການຮຽນຮູ້ ແລະ ການບໍລິການຕ່າງໆ ເຊັ່ນ: ທະນາຄານ, ໄປສະນີ, ຄລີນິກ, ຕະຫຼາດ, ສະຖານທີ່ພັກເຊົາ).

❖ **ສິ່ງອຳນວຍຄວາມສະດວກ**

- ມີເສັ້ນທາງຍຸດທະສາດຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກຜ່ານ ແລະ ສາມາດເຂົ້າເຖິງໄດ້ຢ່າງສະດວກສະບາຍ.
- ມີສະຖານທີ່ເອື້ອອຳນວຍໃນການລົງເຝິກປະສົບການ ແລະ ເຝິກຫັດວິຊາຊີບຄູ.
- ມີເງື່ອນໄຂໃນການເຊັນ MOU ຮ່ວມກັບຫຼາຍສະຖາບັນທັງພາຍໃນ ແລະ ຕ່າງປະເທດ.

4. **ສິ່ງທ້າທາຍ (T) :**

❖ **ສະພາບສັງຄົມ**

- ສະພາບຄ່ານິຍົມຂອງສັງຄົມທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ: ນິຍົມການຮຽນວິຊາກ່ຽວກັບການປົກຄອງ, ເສດຖະກິດ...ຫຼາຍກວ່າຮຽນຄູ ເຮັດໃຫ້ມີແຕ່ນັກຮຽນລະດັບອ່ອນ-ປານກາງເຂົ້າຮຽນຄູ.
- ນັກຮຽນທີ່ມາຮຽນຄູມີຄວາມຮູ້ພື້ນຖານສາຂາວິຊາຕ່າງໆຫຼຸດໂຕນກັນ.
- ສະຖາບັນອື່ນຢູ່ໃນເຂດດຽວກັນທີ່ມີສະຖານະສູງກວ່າ ແຕ່ເຮັດໜ້າທີ່ສ້າງຄູເໝືອນກັນ.

❖ **ດ້ານນະໂຍບາຍ**

- ການວາງມາດຕະຖານການຮັບນັກຮຽນເຂົ້າຮຽນຄູ: ລັກສະນະທາງກາຍະພາບ ເຮັດໃຫ້ຜູ້ມີຄະແນນດີພາດໂອກາດໄດ້ເຂົ້າຮຽນຄູ.
- ຕົວເລກບັນຈຸເຂົ້າເປັນລັດຖະກອນທົ່ວໄປໂດຍສະເພາະລັດຖະກອນຄູ ແຕ່ລະປີຍັງຈຳກັດ ແລະ ຊັກຊ້າ ເຮັດໃຫ້ໂຮງຮຽນພາກລັດພາດໂອກາດໄດ້ຄົນມີຜົນການຮຽນດີເຂົ້າບັນຈຸເປັນລັດຖະກອນຄູ

## II. ວິໄສທັດ ( Vision)

ວິທະຍາໄລຄູສະຫວັນນະເຂດ ເປັນສູນກາງແຫ່ງການພັດທະນາວິຊາຊີບຄູທີ່ມີຄຸນະພາບ ແລະ ຈັນຍາບັນ, ເອົາໃຈໃສ່ການວິໄຈ ສາມາດເຊື່ອມໂຍງໄດ້ກັບສາກົນ.

Savannakhet Teacher Training College is the center of professional development with high quality and ethic teachers, research-oriented, and international cooperation.

## III. ພາລະກິດ (Mission )

ສ້າງວິທະຍາໄລຄູສະຫວັນນະເຂດ ໃຫ້ເປັນສະຖາບັນແຫ່ງການພັດທະນາຄູມືອາຊີບທີ່ມີຄຸນະພາບລະດັບຂົງເຂດ ແລະ ສາກົນ, ສາມາດຕອບສະໜອງຄູໃຫ້ໄດ້ຕາມຄວາມຕ້ອງການຂອງສັງຄົມຢ່າງຕໍ່ເນື່ອງ ເພື່ອປະກອບສ່ວນພັດທະນາການສຶກສາຂັ້ນສາມັນຂອງຊາດໃຫ້ມີຄຸນະພາບ.

Create Savannakhet Teacher Training College to be a professional development institution with high quality in nationally and internationally regions. In addition, we are able to produce teachers to constantly maintain the demands of society in order to collaborate the national education.

## IV. ເປົ້າໝາຍ, ຈຸດປະສົງ ແລະ ກິດຈະກຳ:

### 1. ເປົ້າໝາຍ: ( G )

- ສ້າງຄູທຸກສາຂາວິຊາໃຫ້ມີຄຸນະພາບ ໃຫ້ເປັນທີ່ຍອມຮັບຂອງສັງຄົມ ໂດຍສະເພາະຄູຄະນິດສາດ ແລະ ວິທະຍາສາດ.

- ສົ່ງເສີມການຄົ້ນຄວ້າວິໄຈຂອງຄູ ແລະ ນັກສຶກສາ.
- ສ້າງວິທະຍາໄລຄູ ສະຫວັນນະເຂດໃຫ້ເປັນສະຖາບັນສ້າງຄູ ໃນປີ 2018.
- Build up all teachers to be high quality professional development and to be socially acceptable with particular emphasis on science and math teachers.
- Encourage the joint research of instructors and students.
- Create Savannakhet Teacher Training College to become an effective Teacher Training institution within 2018

**2. ຈຸດປະສົງ ແລະ ກິດຈະກຳ:**

- **ຈຸດປະສົງ 1:** ຍົກລະດັບວຸດທິວິຊາສະເພາະຂອງຄູ ແລະ ເຝິກອົບຮົມຄູໃຫ້ໄດ້ຕາມມາດຖານ COD ແລະ COE.
  - ກິດຈະກຳ 1: ສົ່ງຄູໄປຮຽນໃນລະດັບປະລິນຍາໂທ ແລະ ປະລິນຍາເອກ (2016-2020)
  - ກິດຈະກຳ 2: ສົ່ງຄູໄປເຝິກອົບຮົມທັງພາຍໃນ ແລະ ຕ່າງປະເທດ (2016-2020)
  - ກິດຈະກຳ 3: ເຊີນນັກວິຊາການສາຂາວິຊາທີ່ເປັນເປົ້າໝາຍພັດທະນາຈາກສະຖາບັນພາຍໃນ ແລະ ຕ່າງປະເທດທີ່ມີ MOU ຮ່ວມກັນມາຖອດຖອນບົດຮຽນ.
- **ຈຸດປະສົງ 2:** ຍົກສະມັດຖະພາບຜົນງານວິຊາການຂອງຄູ
  - ກິດຈະກຳ 1: ຮ່ວມມືກັບສະຖາບັນການສຶກສາຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເພື່ອດຳເນີນການວິໄຈສຳລັບພັດທະນາການສອນຂອງຄູ.
  - ກິດຈະກຳ 2: ສະເໜີຂໍຕຳແໜ່ງວິຊາການໃຫ້ຄູຜູ້ມີຜົນງານດ້ານວິຊາການ.
- **ຈຸດປະສົງ 3:** ພັດທະນາແຫຼ່ງຂໍ້ມູນ ແລະ ຫຼັກສູດ
  - ກິດຈະກຳ 1: ປັບປຸງລະບົບອິນເຕີເນັດໃຫ້ທັນສະໄໝກວ່າເກົ່າ.
  - ກິດຈະກຳ 2: ປັບປຸງຫ້ອງສະໝຸດ ແລະ ຂອດບໍລິການ ໃຫ້ສະດວກສຳລັບການຄົ້ນຄວ້າ.
  - ກິດຈະກຳ 3: ສະໜອງປຶ້ມແບບຮຽນ ແລະ ເອກະສານກ່ຽວຂ້ອງກັບຫຼັກສູດທີ່ເປີດສອນໃຫ້ຄົບຖ້ວນ ແລະ ພຽງພໍ.
  - ກິດຈະກຳ 4: ທົບທວນຫຼັກສູດລາຍວິຊາທີ່ຢູ່ໃນແຜນພັດທະນາ.
  - ກິດຈະກຳ 5: ສົ່ງເສີມໃຫ້ຄູ-ອາຈານ ຮຶບໂຮມ, ແປ ແລະ ຮຽບຮຽງເອກະສານວິຊາການຕ່າງໆ.

**3. ສາຍວິຊາທີ່ເປັນເປົ້າໝາຍໃນການພັດທະນາເປັນ COD/COE**

ເປົ້າໝາຍສຳລັບພັດທະນາມີ 2 ສາຂາວິຊາ ຄື:

- ສາຍຄູຄະນິດສາດ
- ສາຍຄູເຄມີສາດ

**4. ເປົ້າໝາຍໃນການກໍ່ສ້າງບຸກຄະລາກອນ**

| ຕົວຊີ້ບອກ | **ຈຸດເລີ່ມຕົ້ນ** | | **ເປົ້າໝາຍ 3 ປີ** | | **ເປົ້າໝາຍ 5 ປີ** | | **ລວມຍອດ** | |
|---|---|---|---|---|---|---|---|---|
| | MA | PhD | MA | PhD | MA | PhD | MA | PhD |
| ສາຍຄູຄະນິດສາດ | 10 | 1 | + 3 | + 1 | + 3 | + 2 | 12 | 4 |
| ສາຍຄູເຄມີສາດ | 6 | 0 | + 2 | +1 | + 4 | + 1 | 10 | 2 |
| ລວມ | 16 | 1 | + 5 | + 2 | + 7 | + 3 | 22 | 6 |
| | ປັດຈຸບັນ | | In 3 years | | In 5 years | | In year 2020 | |

**5. ແຜນປັບປຸງການປະກັນຄຸນນະພາບໃນສົກຮຽນ 2016 ຫາ 2020**

| ລ/ດ | ໜ້າວຽກ/ຕົວຊີ້ບອກ | ກິດຈະກຳ | ຜູ້ຮັບຜິດຊອບ | ວັນເວລາ |
|---|---|---|---|---|
| 1 | ກຽມຄວາມພ້ອມດ້ານນັກວິຊາການໃຫ້ໄດ້ຕາມມາດຖານສູນແຫ່ງຄວາມເປັນເລີດ | ສົ່ງຄູໄປຮຽນລະດັບປະລິນຍາໂທ ແລະ ເອກ | ຫ້ອງການສົ່ງເສີມວິຊາການ | 2016 - 2017 |
| | | ເຝິກອົບຮົມເທັກນິກການສອນໃຫ້ຄູສອນ | ຫ້ອງການພັດທະນາຄູ | 2017 - 2019 |
| | | ເຊີນຊ່ຽວຊານຈາກສະຖາບັນການສຶກສາຈາກຕ່າງປະເທດ ທີ່ມີ MOU ຮ່ວມກັນ ມາໃຫ້ບົດຮຽນດ້ານວິຊາການ | ໜ່ວຍງານພົວພັນຕ່າງປະເທດ | ກໍລະກົດ 2017<br>ຕຸລາ 2019 |
| | | ຂໍທຶນການສຶກສາຈາກຄູ່ຮ່ວມມືສາກົນໃຫ້ຄູໄດ້ໄປຍົກລະດັບ | | ທັນວາ 2017<br>ທັນວາ 2019 |

| | | | | |
|---|---|---|---|---|
| 2 | ສົ່ງເສີມວຽກງານວິໄຈຂອງຄູ ແລະ ເຝິກອົບຮົມ | ສ້າງສະພາວິຊາການເພື່ອຮັບຮອງຜົນງານວິຊາການຂອງຄູ: ຜົນວິໄຈ , ການຮຽບຮຽງປຶ້ມປະກອບການສອນທີ່ໄດ້ຄຸນະພາບຕາມມາດຖານ | ຫ້ອງການສົ່ງເສີມວິຊາການ, ຫ້ອງການພັດທະນາຄູ ແລະ ຫ້ອງການວັດຜົນ-ປະເມີນຜົນ | ມັງກອນ 2017 |
| | | ຂໍງົບປະມານເພີ່ມເຕີມໃສ່ວຽກງານເຝິກອົບຮົມວິຊາຄູ ແລະ ວຽກງານວິໄຈຮ່ວມກັບສະຖາບັນຕ່າງໆພາຍໃນ ແລະ ຕ່າງ ປະເທດເພື່ອເຮັດການວິໄຈ ແລະ ຮັບຮອງຜົນງານວິຊາການຮ່ວມກັນ | ຫ້ອງການພັດທະນາຄູ ແລະ ຫ້ອງການຈັດຕັ້ງ | ພະຈິກ 2017 |
| | | ສົ່ງຄູສະເໜີຜົນງານວິຊາການໃນລະດັບຊາດ ແລະ ສາກົນ | ໜ່ວຍງານພົວພັນຕ່າງປະເທດ ແລະ ຫ້ອງການສົ່ງເສີມວິຊາການ | ກໍລະກົດ 2017 |
| | | ສະເໜີຂໍຕຳແໜ່ງວິຊາການໃຫ້ຄູຜູ້ມີເງື່ອນໄຂ ແຕ່ລະສົກຮຽນ | ຫ້ອງການຈັດຕັ້ງ, ຫ້ອງການພັດທະນາຄູ ແລະ ຫ້ອງການວັດຜົນປະເມີນຜົນ | ພະຈິກ 2017 |
| 3 | ປັບປຸງແຫຼ່ງຂໍ້ມູນສຳລັບການຮຽນຮູ້ໃຫ້ທັນສະໄໝກວ່າເກົ່າ | ເຝິກອົບຮົມວຽກງານຫ້ອງສະໝຸດໃຫ້ພະນັກງານຫ້ອງສະໝຸດ | ຫ້ອງການສົ່ງເສີມວິຊາການ | ກຸມພາ 2017 |
| | | ບໍລິການວຽກງານຫໍສະໝຸດໂດຍໃຊ້ລະບົບເອເລັກໂທຣນິກ | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການວັດຜົນ - ປະເມີນຜົນ | ກຸມພາ 2017 |
| | | - ປັງປຸງລະບົບອິນເຕີເນັດໃຫ້ທັນສະໄໝກວ່າເກົ່າ ແລະ ຂະຫຍາຍພື້ນທີ່ບໍລິການໃຫ້ກວ້າງຂວາງກວ່າເກົ່າ | | |
| | | ຊື້ປຶ້ມທີ່ຮັບໃຊ້ການຮຽນ-ການສອນເຂົ້າຫ້ອງສະໝຸດໃຫ້ພຽງພໍກັບຄວາມຕ້ອງການ | ຫ້ອງການສົ່ງເສີມວິຊາການ | ທັນວາ 2016 |

| | | | | |
|---|---|---|---|---|
| 4 | ປັບປຸງຫຼັກສູດ | ທົບທວນຫຼັກສູດລະດັບອະນຸປະລິນຍາ ແລະ ປະລິນຍາຕີໃນທຸກສາຂາທີ່ດຳເນີນການສອນຢູ່ໃນສະຖາບັນເພື່ອສ້າງຄວາມເປັນເອກະພາບໃຫ້ຄູທີ່ນຳໃຊ້ຫຼັກສູດ ແລະ ເອກະສານທີ່ສະໜັບສະໜູນຫຼັກສູດ | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການສາຍທີ່ກ່ຽວຂ້ອງ | ມິຖຸນາ - ກໍລະກົດ 2017 |
| | | ດັດແກ້ໂຄງສ້າງເນື້ອໃນບາງວິຊາໃຫ້ສອດຄ່ອງຫຼັກສູດສາມັນໃນແຕ່ລະຊັ້ນຮຽນ | | ກໍລະກົດ 2017 |
| | | ປະກອບເອກະສານທີ່ຮັບໃຊ້ໃນຫຼັກສູດໃຫ້ຄົບຊຸດເພື່ອອຳນວຍຄວາມສະດວກໃຫ້ແກ່ຄູ | | ສິງຫາ 2017 |

ທີ່ ວິທະຍາໄລຄູສະຫວັນນະເຂດ, ວັນທີ ...................

**ຜູ້ອຳນວຍການ**

ວິທະຍາໄລຄູ ສະຫວັນນະເຂດ

ລັດສະໝີ ພະໄຊສີ